ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດຕັ້ງການເລົ່າມູນເຊື້ອວັນສ້າງຕັ້ງ ກຳມະບານລາວ ຄົບຮອບ 63 ປີ



ທ່ານ ສີມູນ ອຸ່ນລາສີ, ຮອງປະທານສູນກາງສະຫະພັນກຳມະບານລາວ

ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການເລົ່າມູນເຊື້ອວັນສ້າງຕັ້ງກຳມະບານລາວ ຄົບຮອບ 63 ປີ (ວັນທີ 1 ກຸມພາ 1956 - 1 ກຸມພາ 2019) ຂຶ້ນໃນວັນທີ 16 ກຸມພາ 2019 ທີ່ສະໂມສອນສະຖາບັນການທະນາຄານແຫ່ງ ສປປ ລາວ. ໂດຍການໃຫ້ກຽດເປັນປະທານຂອງທ່ານ ສີມູນ ອຸ່ນລາສີ, ຮອງປະທານສູນກາງສະຫະພັນກຳມະບານລາວ, ພ້ອມນີ້ກໍ່ມີ ທ່ານນາງ ຂັນແກ້ວ ຫຼ້າມະນີເງິາ, ປະທານສະຫະພັນກຳມະບານ ທຫລ ແລະ ມີຄະນະກົມ ທຫລ, ຄະນະອຳນວຍການທະນາຄານທຸລະກິດລັດ, ທະນາຄານທຸລະກິດເອກະຊົນ ແລະ ບັນດາສະມາຊິກກຳມະບານທະນາຄານ ເຂົ້າຮ່ວມຫຼາຍກວ່າ 500 ຄົນ.

ໃນພິທີ ທ່ານຮອງປະທານສູນກາງສະຫະພັນກຳມະບານລາວ ໄດ້ນຳສະເໜີເຖິງປະຫວັດຄວາມເປັນມາ, ມູນເຊື້ອ, ຄວາມໝາຍຄວາມສຳຄັນ ແລະ ການເຕີບໃຫຍ່ຂະຫຍາຍຕົວ ຂອງສະຫະພັນກຳມະບານລາວ ທີ່ໄດ້ປະກອບສ່ວນເຂົ້າໃນການຕໍ່ສູ້ປົດປ່ອຍປະເທດຊາດ ໃນອະດີດ ກໍ່ຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ. ໂດຍນັບແຕ່ທ້າຍ ສັດຕະວັດທີ 19 ເປັນຕົ້ນມາ ພວກຈັກກະພັດລ່າເມືອງຂຶ້ນ ໄດ້ເຂົ້າມາຍຶດຄອງ 3 ປະເທດອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ ແລະ ໄດ້ກົດຂີ່ຂູດຮີດຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າຢ່າງໂຫດຮ້າຍປ່າເຖື່ອນ, ໂດຍສືບທອດມູນເຊື້ອຮັກຊາດອັນແຮງກ້າ, ເດັດຂາດບໍ່ອ່ອນຍອມຂອງບັນພະບູລຸດລາວ, ຍ້ອນທົນຕໍ່ການກົດຂີ່ຂູດຮີດຂອງພວກລ່າເມືອງຂຶ້ນ ແລະ ພວກສັກດີນາປະຕິການບໍ່ໄດ້, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຢ່າງອົງອາດກ້າຫານຫລາຍໆຄັ້ງເປັນຕົ້ນ: ການຕໍ່ສູ້ຂອງກຳມະກອນຢູ່ບໍ່ກົ່ວໂພນຕິ້ວ, ກຳມະກອນໄຟຟ້າວຽງຈັນ, ກຳມະກອນແລ່ນເຮືອຈັກຈຳປາສັກ, ຫຼວງພະບາງ, ກຳມະກອນສ້າງທາງເລກ 9 ແລະ ພາກສ່ວນອື່ນໆ; ເພື່ອຕ້ານຕໍ່ການເກັບສ່ວຍອາກອນ, ການບັງຄັບເກັບເກນໄປເປັນກູລີ, ການທຸບຕີ

ທໍລະມານ, ການຈັບກຸມຄຸມຂັງອັນປ່າເຖື່ອນຂອງພວກເຂົາ, ກຳມະກອນຈຶ່ງໄດ້ລຸກຂຶ້ນຕໍ່ສູ້ໂດຍເລີ່ມຈາກການຕໍ່ສູ້ທີ່ມີລັກສະນະເກີດຂຶ້ນເອງໄດ້ກາຍເປັນຂະບວນແຜ່ລາມອອກຢ່າງກ້ວາງຂວາງໃນທົ່ວປະເທດ, ນຳພາໂດຍບັນພະບູລຸດຜູ້ຮັກຊາດແຕ່ເໜືອຮອດໃຕ້, ໄດ້ຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຢ່າງດຸເດືອດ, ແຕ່ຂະບວນການຕໍ່ສູ້ໄລຍະນັ້ນບໍ່ໄດ້ຮັບໄຊຊະນະຍ້ອນບໍ່ມີພັກນຳພາ. ມາຮອດວັນທີ 1 ກຸມພາ 1956 ສູນກາງພັກໄດ້ມີມະຕິຕົກລົງ ສ້າງຕັ້ງຫ້ອງການກຳມະບານລາວ ຂຶ້ນຢ່າງເປັນທາງການ ຢູ່ທີ່ເຂດທີ່ໝັ້ນແຂວງຫົວພັນ. ເພື່ອເປັນການປຸກລະດົມ ຂົນຂວາຍໂຄສະນາ, ເຕົ້າໂຮມ ເອົາກຳມະກອນ, ຊາວຜູ້ອອກແຮງງານລາວ ບັນດາເຜົ່າທົ່ວປະເທດ ໃຫ້ມີຄວາມຕື່ນຕົວ ເຂົ້າຮ່ວມຂະບວນການປະຕິວັດ ຕໍ່ສູ້ກູ້ຊາດ, ມີນໍ້າໃຈຮັກຊາດ, ເສຍສະຫລະ, ມີທັດສະນະ ຊົນຊັ້ນກຳມະກອນ, ສົ່ງເສີມການ ມີວຽກເຮັດງານທຳ ແລະ ເປັນຕົວແທນ ໃຫ້ແກ່ການປົກປ້ອງສິດ ຜົນປະໂຫຍດ ອັນຊອບທຳ ໃຫ້ແກ່ກຳມະກອນ, ຊາວຜູ້ອອກແຮງງານ ບັນດາເຜົ່າເພື່ອເປັນກຳລັງແຮງ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ. ໂດຍນັບຕັ້ງແຕ່ໄດ້ຮັບການສ້າງຕັ້ງຂຶ້ນມາໂດຍຜ່ານຂະບວນວິວັດແຫ່ງການຕໍ່ສູ້ພາຍໃຕ້ຄັນທຸງເອກະລາດ ແລະ ປະຊາທິປະໄຕຂອງພັກ, ຂອງຊາດ, ອີງການຈັດຕັ້ງກຳມະບານລາວ ກໍໄດ້ຕັ້ງໜ້າເຄື່ອນໄຫວ, ກໍ່ສ້າງ, ປັບປຸງບູລະນະການຈັດຕັ້ງຂອງຕົນໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ.






ໃນຕອນທ້າຍຂອງພິທີ, ທ່ານຮອງປະທານສູນກາງສະຫະພັນກຳມະບານລາວໄດ້ຮຽກຮ້ອງໃຫ້ພະນັກງານ, ສະມາຊິກກຳມະບານຂອງຂະແໜງທະນາຄານ ເພີ່ມທະວີເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ, ມີຄວາມສາມັກຄີ ຊ່ວຍເຫລືອເຊິ່ງກັນ ແລະ ກັນ ພາຍໃນກຳມະບານຮາກຖານ ຂອງຕົນ ແລະ ນຳເອົາເນື້ອໃນຈິດໃຈຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສູນກາງ ສະຫະພັນກຳມະບານລາວວາງອອກ ເພື່ອນຳໄປຈັດຕັ້ງປະຕິບັດ, ຜັນຂະຫຍາຍ ຢູ່ພາຍໃນ ກຳມະບານຮາກຖານ ຂອງຕົນ ໃຫ້ນັບມື້ໄດ້ຮັບຜົນດີ ຂຶ້ນເລື້ອຍໆ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ